# ບົດບັນທຶກ

## ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ IX

## ລະຫວ່າງ

## ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ

## ແລະ

## ກະຊວງອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ

ປະຕິບັດຕາມເນື້ອໃນຈິດໃຈບົດບັນທຶກກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ VIII ທີ່ ແຂວງ ເຊກອງ ສປປ ລາວ ແລະ ການອະນຸມັດຂອງສອງລັດຖະບານ ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ IX ໄດ້ຈັດຂຶ້ນ ໃນລະຫວ່າງວັນທີ 25-27 ກັນຍາ 2014 ທີ່ ແຂວງ ດຽນບຽນ ສສ ຫວຽດນາມ ພາຍໃຕ້ການເປັນປະທານຮ່ວມ ຂອງ ທ່ານ ນາງ ເຂັມມະນີ ພົນເສນາ, ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສປປ ລາວ ແລະ ທ່ານ ຫວູ ຮວີ ຮວາງ, ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ, ຜູ້ແທນເຂົ້າຮ່ວມກອງປະຊຸມລວມມີ ບັນດາກະຊວງ, ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ພ້ອມທັງພາກທຸລະກິດ ຂອງສອງປະເທດ ລາວ-ຫວຽດນາມ ຕໍ່ໄປເອີ້ນວ່າ "ສອງຝ່າຍ" (ບັນຊີລາຍຊື່ຄະນະເຂົ້າຮ່ວມກອງປະຊຸມ ຕາມເອກະສານຊ້ອນທ້າຍ 1 ແລະ 2).

ກອງປະຊຸມຍັງໄດ້ຮັບກຽດເຂົ້າຮ່ວມ ແລະ ກ່າວຕ້ອນຮັບໂດຍ ທ່ານ ນາງ ລໍ ມາຍ ຈິງ, ກຳມະການສູນກາງພັກ, ເລຂາພັກແຂວງດຽນບຽນ.

ທ່າມກາງບັນຍາກາດທີ່ເຕັມໄປດ້ວຍໄມຕີຈິດມິດຕະພາບ, ຄວາມສາມັກຄີສະໜິດແໜ້ນ ແລະ ຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ສອງຝ່າຍໄດ້ຮ່ວມກັນສົນທະນາແລກປ່ຽນ, ພ້ອມທັງຕີລາຄາຄືນໝາກຜົນການຮ່ວມມືໃນຂະແໜງການອຸດສາຫະກຳ ແລະ ການຄ້າ ໂດຍສະເພາະແມ່ນວຽກງານການຄ້າຊາຍແດນ ລະຫວ່າງ ສອງປະເທດໃນໄລຍະຜ່ານມາ ນັບແຕ່ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ VIII ເດືອນ ຕຸລາ ປີ 2012 ທີ່ ແຂວງ ເຊກອງ ສປປ ລາວ.

ສອງຝ່າຍເຫັນໄດ້ຄວາມສຳຄັນຂອງກອງປະຊຸມ ຄັ້ງທີ IX ເນື່ອງຈາກວ່າ ກອງປະຊຸມຄັ້ງນີ້ ໄດ້ຖືກຈັດຂຶ້ນໃນຊ່ວງໄລຍະທີ່ສອງລັດຖະບານ ລາວ-ຫວຽດນາມ ໄດ້ວາງເປົ້າໝາຍມູນຄ່າການນຳເຂົ້າ-ສົ່ງອອກ ໃຫ້ສາມາດບັນລຸໄດ້ 02 ຕື້ ໂດລາສະຫະລັດ ໃນປີ 2015. ພ້ອມກັນນັ້ນ, ສອງຝ່າຍໄດ້ເຫັນດີເປັນເອກະພາບກັນວ່າ ກົນໄກການຮ່ວມມືຮູບແບບນີ້ແມ່ນມີຄວາມຈຳເປັນ ແລະ ມີປະສິດທິພາບສູງ ສາມາດຍົກສູງສາຍພົວພັນມິດຕະພາບ ແລະ ການຮ່ວມມືຮອບດ້ານ ຂອງ ສອງຊາດ ລາວ-ຫວຽດນາມ.

ອີງຕາມເນື້ອໃນຈິດໃຈຂ້າງເທິງ ສອງຝ່າຍໄດ້ເປັນເອກະພາບກັນ ດັ່ງນີ້:

1. <u>ຕີລາຄາການຮ່ວມມືໃນວຽກງານການຄ້າຊາຍແດນ ລາວ-ຫວຽດນາມ</u>

ກອງປະຊຸມຕີລາຄາສູງບັນດາຜົນງານທີ່ສອງຝ່າຍຍາດມາໄດ້ ໃນການເຄື່ອນໄຫວວຽກງານການຄ້າຊາຍແດນ. ຜ່ານການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມຄັ້ງທີ VIII ເຖິງປະຈຸບັນໄດ້ປະກອບສ່ວນໃນການເພີ່ມທະວີການຮ່ວມມືໃນຂົງເຂດເສດຖະກິດ ແລະ ສັງຄົມ ລະຫວ່າງ ສອງປະເທດເວົ້າລວມ, ເວົ້າສະເພາະແມ່ນໄດ້ປະກອບສ່ວນໃນວຽກງານການພົວພັນແລກປ່ຽນສິນຄ້າຜ່ານດ່ານຊາຍແດນ ຂອງ ສອງປະເທດ.

ສອງຝ່າຍໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດໂຄງການພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ໄລຍະ 2012-2015. ເຖິງແມ່ນວ່າຈະໄດ້ຮັບຜົນສະທ້ອນຈາກວິກິດການທາງດ້ານເສດຖະກິດທັງຈາກພາຍໃນ ແລະ

ພາຍນອກ ແຕ່ການຮ່ວມມືທາງດ້ານການຄ້າຂອງສອງຝ່າຍ ໃນໄລຍະສອງປີຜ່ານມາ ກໍຍັງມີການຂະຫຍາຍຕົວຢ່າງຕັ້ງໜ້າ ເຊິ່ງມັນໄດ້ສະແດງອອກ ດັ່ງນີ້:

ລວມຍອດມູນຄ່າການນຳເຂົ້າ-ສົ່ງອອກ ລະຫວ່າງ ສອງປະເທດ ລາວ-ຫວຽດນາມ ໃນປີ 2013 ສາມາດບັນລຸໄດ້ 1,25 ຕື້ ໂດລາສະຫະລັດ ເພີ່ມຂຶ້ນ 27,09% ທຽບໃສ່ປີ 2012 (912,61 ລ້ານ ໂດລາສະຫະລັດ) ເພີ່ມຂຶ້ນ 2,8 ເທົ່າ ທຽບໃສ່ປີ 2009 (446,68 ລ້ານ ໂດລາສະຫະລັດ) ໃນນັ້ນ, ມູນຄ່າການສົ່ງອອກຂອງລາວໄປຫວຽດນາມ ໃນປີ 2013 ບັນລຸ 667,37 ລ້ານ ໂດລາສະຫະລັດ ເພີ່ມຂຶ້ນ 33,51% ທຽບໃສ່ປີ 2012 (596,24 ລ້ານ ໂດລາສະຫະລັດ), ສະເພາະໃນ 06 ເດືອນ ຕົ້ນປີ 2014 ລວມຍອດມູນຄ່າການນຳເຂົ້າ-ສົ່ງອອກຜ່ານຊາຍແດນ ລະຫວ່າງ ສອງປະເທດ ບັນລຸໄດ້ 888,97 ລ້ານ ໂດລາສະຫະລັດ ເພີ່ມຂຶ້ນ 50,19% ທຽບໃສ່ໄລຍະດຽວກັນຂອງ ປີ 2013 ໃນນັ້ນ, ການສົ່ງອອກໃນ 06 ເດືອນຕົ້ນປີ 2014 ໄປຫວຽດນາມ ບັນລຸໄດ້ 667,37 ລ້ານ ໂດລາສະຫະລັດ ເພີ່ມຂຶ້ນ 43,63% ທຽບໃສ່ໄລຍະດຽວກັນຂອງປີ 2013, ຄາດຄະເນໝົດປີ 2014 ຈະສາມາດບັນລຸໄດ້ 1,5 ຕື້ ໂດລາສະຫະລັດ. ການສົ່ງອອກ ຂອງ ລາວ ໄປ ຫວຽດນາມ ຕົ້ນຕໍມີປະເພດສິນຄ້າເຊັ່ນ: ໄມ້, ຜະລິດຕະພັນຈາກໄມ້, ກາເຟ, ມັນຕົ້ນ, ຢາງພາລາ, ເຂົ້າ, ສາລີ, ເຄື່ອງປ່າຂອງດົງ, ແຮ່ທາດ ແລະ ອື່ນໆ.

2. <u>ການຮ່ວມມືພັດທະນາຕະຫຼາດຊາຍແດນ</u>

**2.1. ການປະຕິບັດເນື້ອໃນແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020.**

- ຝ່າຍລາວ: ປະຕິບັດຕາມການມອບໝາຍຂອງຫ້ອງວ່າການລັດຖະບານ ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ ໄດ້ອອກຂໍ້ຕົກລົງ ສະບັບເລກທີ 1000/ອຄ.ກຂອ, ລົງວັນທີ 31 ພຶດສະພາ 2013 ກ່ຽວກັບການຈັດຕັ້ງປະຕິບັດເນື້ອໃນແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020.
- ຝ່າຍຫວຽດນາມ: ປະຕິບັດຕາມທິດຊີ້ນຳຂອງລັດຖະບານ ກະຊວງອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ໄດ້ອອກຂໍ້ຕົກລົງ ສະບັບເລກທີ 6076/QD-BCT, ລົງວັນທີ 15 ຕຸລາ 2012 ກ່ຽວກັບການຈັດຕັ້ງປະຕິບັດ ເນື້ອໃນແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020.

ເພື່ອເປັນພື້ນຖານໃຫ້ແກ່ການປະສານສົມທົບກັນ ໃນການຈັດຕັ້ງປະຕິບັດ ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ໂດຍຜ່ານສະຖານທູດຂອງທັງສອງຝ່າຍໄດ້ຜັດປ່ຽນກັນລົງນາມໃນຂໍ້ຕົກລົງຮ່ວມ ກ່ຽວກັບ ການຈັດຕັ້ງປະຕິບັດແຜນແມ່ບົດຂ້າງເທິງ ໃນປີ 2013.

**2.2. ໂຄງການຍົກລະດັບຕະຫຼາດຫ້ວຍດິນດຳ, ບ້ານດິນດຳ, ເມືອງໜອງແຮດ, ແຂວງຊຽງຂວາງ, ສປປ ລາວ.**

ກະຊວງອຸດສາຫະກຳ ແລະ ການຄ້າ ຂອງທັງສອງຝ່າຍ ໄດ້ປະສານງານກັບ ບັນດາກະຊວງ, ຂະແໜງການກ່ຽວຂ້ອງ, ອຳນາດການປົກຄອງແຂວງ ຊຽງຂວາງ (ລາວ) ແລະ ອຳນາດການປົກຄອງແຂວງ ເງະອານ (ຫວຽດນາມ) ສຳເລັດຂັ້ນຕອນການກະກຽມການລົງທຶນ ໂຄງການຍົກລະດັບຕະຫຼາດດັ່ງກ່າວ ມາຮອດປະຈຸບັນຍັງບໍ່ມີທຶນມາຈັດຕັ້ງຜັນຂະຫຍາຍ.

3. <u>ວຽກງານການຮ່ວມມືລົງກວດກາ ສະພາບການອຳນວຍຄວາມສະດວກໃຫ້ແກ່ຄົນ, ສິນຄ້າ ແລະ ພາຫະນະ ຜ່ານດ່ານຊາຍແດນ ຂອງ ສອງປະເທດ.</u>

ໃນໄລຍະຜ່ານມາ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງທັງສອງຝ່າຍ ໄດ້ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນຊາຍແດນທີ່ກ່ຽວຂ້ອງ ຈັດຕັ້ງຄະນະເຮັດວຽກປະສົມລົງກວດກາສະພາບການອຳນວຍຄວາມສະດວກໃຫ້ແກ່ຄົນ, ສິນຄ້າ ແລະ ພາຫະນະ ໄປ-ມາ ຜ່ານດ່ານຊາຍແດນ

ລາວ-ຫວຽດນາມ ລະອຽດຄື: ໃນລະຫວ່າງວັນທີ 20-27 ເມສາ 2013 ຄະນະໄດ້ລົງເຮັດວຽກກວດກາຢູ່ຄູ່ດ່ານສາກົນ ນາເພົ້າ (ແຂວງຄຳມ່ວນ) - ຈາລໍ (ແຂວງກວາງບິງ), ດ່ານແດນສະຫວັນ (ແຂວງສະຫວັນນະເຂດ) - ລາວບາວ (ແຂວງກວາງຈີ) ແລະ ໃນລະຫວ່າງ ວັນທີ 23-26 ມິຖຸນາ 2014 ຄະນະໄດ້ລົງກວດກາຢູ່ຄູ່ດ່ານສາກົນນ້ຳພາວ (ແຂວງບໍລິຄຳໄຊ) - ເກົາແຈວ (ແຂວງຮ່າຕິງ) ແລະ ດ່ານນາເພົ້າ (ແຂວງຄຳມ່ວນ) - ຈາລໍ (ແຂວງກວາງບິງ).

4. <u>ບັນຫາຄົງຄ້າງ.</u>

ເຖິງແມ່ນວ່າທັງສອງຝ່າຍຈະໄດ້ພະຍາຍາມສູ້ຊົນຈັດຕັ້ງປະຕິບັດຕາມເປົ້າໝາຍທີ່ສອງລັດຖະບານວາງອອກ ແລະ ສາມາດຍາດມາໄດ້ໝາກຜົນທີ່ກ່າວມາຂ້າງເທິງ ແຕ່ເນື່ອງຈາກວ່າຄວາມພ້ອມທາງດ້ານລະບຽບການ, ການປຸກລະດົມ ແລະ ການດຶງດູດການລົງທຶນ ເພື່ອພັດທະນາພື້ນຖານໂຄງລ່າງໃນຂົງເຂດຊາຍແດນ, ຕະຫຼາດຊາຍແດນ ແລະ ເສັ້ນທາງຄົມມະນາຄົມ ຍັງພົບຄວາມຫຍຸ້ງຍາກ ແລະ ຈຳກັດ. ດັ່ງນັ້ນ, ຈຶ່ງສົ່ງຜົນໃຫ້ເກີດມີຂໍ້ຄົງຄ້າງ ດັ່ງນີ້:

- ການກໍ່ສ້າງ ແລະ ຍົກລະດັບຕະຫຼາດຊາຍແດນ ຕາມເນື້ອໃນແຜນແມ່ບົດ ຍັງບໍ່ທັນໄດ້ຮັບໝາກຜົນ ຍ້ອນສອງຝ່າຍຍັງບໍ່ສາມາດລະດົມທຶນຈາກພາກທຸລະກິດເຂົ້າມາລົງທຶນໃນໂຄງການ ທີ່ກ່າວມາຂ້າງເທິງນັ້ນ.

- ຫຍຸ້ງຍາກໃນການການປັບປຸງ ແລະ ຂະຫຍາຍເສັ້ນທາງສັນຈອນເຊື່ອມຕໍ່ແຕ່ສູນກາງຫາດ່ານຊາຍແດນຂອງສອງປະເທດທີ່ຖືກເປ່ເພ, ເສັ້ນທາງທີ່ມີຢູ່ກໍ່ສາມາດສັນຈອນໄດ້ແຕ່ໃນລະດູແລ້ງ ສ່ວນລະດູຝົນແມ່ນ ໄປ-ມາຫຍຸ້ງຍາກ.

ນອກຈາກນັ້ນ, ບັນດາຂໍ້ຕົກລົງ ກ່ຽວກັບ ການອຳນວຍຄວາມສະດວກໃຫ້ແກ່ຄົນ, ສິນຄ້າ ແລະ ພາຫະນະຜ່ານດ່ານຊາຍແດນຂອງສອງປະເທດ ບາງຄັ້ງກໍຍັງພົບບັນຫາໃນການຈັດຕັ້ງປະຕິບັດ.

5. <u>ທິດທາງແກ້ໄຂ ແລະ ແຜນການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ.</u>

ເພື່ອເຮັດໃຫ້ການຄ້າຊາຍແດນ ລາວ-ຫວຽດນາມ ນັບມື້ນັບມີການພັດທະນາ ປະກອບສ່ວນເຮັດໃຫ້ມູນຄ່າການຄ້າສອງຝ່າຍບັນລຸເປົ້າໝາຍ 02 ຕື້ ໂດລາສະຫະລັດ ໃນປີ 2015 ຕາມທີ່ການນຳຂັ້ນສູງຂອງທັງສອງຝ່າຍໄດ້ວາງອອກ ສອງຝ່າຍໄດ້ເຫັນດີເປັນເອກະພາບກັນສ້າງແຜນການເຄື່ອນໄຫວ ດັ່ງນີ້:

- ສ້າງກົນໄກການຈັດກອງປະຊຸມການຮ່ວມພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ກາງສະໄໝໂດຍກະຊວງອຸດສາຫະກຳ ແລະ ການຄ້າ ທັງສອງຝ່າຍຜັດປ່ຽນກັນເປັນເຈົ້າການໃນການຈັດ ແນໃສ່ເພື່ອຕີລາຄາ ແລະ ຮ່ວມກັນແກ້ໄຂຂໍ້ຫຍຸ້ງຍາກ ໃນການຈັດຕັ້ງຜັນຂະຫຍາຍເນື້ອໃນບົດບັນທຶກໃຫ້ທັນກັບສະພາບຕົວຈິງ.

- ສອງຝ່າຍສືບຕໍ່ປະສານກັນຈັດຕັ້ງປະຕິບັດໂຄງການ "ແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020" ທີ່ໄດ້ຮັບອະນຸຍາດຈາກລັດຖະບານສອງຝ່າຍ. ພິເສດ, ສອງຝ່າຍຈະປະສານສົມທົບກັບບັນດາແຂວງ ສ້າງແຜນການລະອຽດ ເພື່ອລະດົມທຶນຈາກພາກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ມາຈັດຕັ້ງຜັນຂະຫຍາຍແຜນແມ່ບົດດັ່ງກ່າວ.

- ສືບຕໍ່ປະສານສົມທົບກັນ ຈັດຕັ້ງການກວດກາວຽກງານການຄຸ້ມຄອງຕະຫຼາດຊາຍແດນ 02 ຄັ້ງ/ປີ, ຂໍ້ຕົກລົງ ກ່ຽວກັບ ການໃຫ້ບູລິມະສິດຫຼຸດຜ່ອນອັດຕາພາສີນຳເຂົ້າ-ສົ່ງອອກ 50% ແລະ 0%, ການປະຕິບັດຂໍ້ຕົກລົງ ຮ່າໂນຍ 2007 ກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ຄົນ, ສິນຄ້າ ແລະ ພາຫະນະຜ່ານດ່ານຊາຍແດນ ລາວ-ຫວຽດນາມ.

- ສອງຝ່າຍຈະປະສານກັບບັນດາກະຊວງ ແລະ ຂະແໜງການກ່ຽວຂ້ອງ ໃນການຊຸກຍູ້ ແລະ ເປີດກວ້າງການປະຕິບັດຮູບແບບການກວດກາ "ປະຕູດຽວ, ຈຸດດຽວ" ຢູ່ຄູ່ດ່ານສາກົນແດນສະຫວັນ (ແຂວງສະຫວັນນະເຂດ) - ລາວບາວ (ແຂວງກວາງຈີ) ຕາມແຜນການທີ່ໄດ້ຕົກລົງກັນ, ເປັນເອກະພາບກັນສະເໜີໃຫ້ທັງສອງຝ່າຍ

ຮັບປະກັນທາງດ້ານເວລາເປີດປິດດ່ານຊາຍແດນ ແລະ ອັດຕາການເກັບຄ່າທຳນຽມພາຫະນະຂົນສົ່ງ ທີ່ຜ່ານດ່ານຊາຍແດນຂອງສອງປະເທດ ເພື່ອກ້າວໄປເຖິງການລົບລ້າງການເກັບຄ່າທຳນຽມຂົນສົ່ງ ລະຫວ່າງ ສອງປະເທດ ຢູ່ເຂດເສດຖະກິດດ່ານຊາຍແດນ.

- ສອງຝ່າຍຈະປະສານງານກັນ ເພື່ອເຮັດໃຫ້ສຳເລັດການຄົ້ນຄວ້າຄວາມເປັນໄປໄດ້ ໃນການສ້າງຂໍ້ຕົກລົງ ແລະ ລະບຽບການຄຸ້ມຄອງຕະຫຼາດຊາຍແດນຮ່ວມ ລະຫວ່າງ ລາວ-ຫວຽດນາມ ໃນປີ 2015 ເພື່ອທົດລອງນຳໃຊ້ກັບບາງຕະຫຼາດລຽບຕາມແນວຊາຍແດນ.

- ສອງຝ່າຍຈະປະສານກັນຄົ້ນຄວ້າສ້າງແຜນແມ່ບົດລວມ ໃນການພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຮອດປີ 2020 ວິໄສທັດຮອດປີ 2025 ໂດຍຈະເອົາໃຈໃສ່ຄົ້ນຄ້ວາປັບປຸງວິທີການຮ່ວມມືພັດທະນາການຄ້າຊາຍແດນ ພາຍຫຼັງທີ່ສອງປະເທດເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ .

- ປະສານກັນຄົ້ນຄວ້າພັດທະນາການບໍລິການ ການຄ້າເຂດດ່ານຊາຍແດນ ແລະ ລະບົບການແຈກຢາຍສິນຄ້າຜ່ານຊາຍແດນ ໂດຍສ້າງຕັ້ງຄະນະເຮັດວຽກໜຶ່ງຂຶ້ນ ເພື່ອພົບປະແລກປ່ຽນກ່ຽວກັບການເຄື່ອນໄຫວວຽກງານການຄ້າຊາຍແດນ, ການພົບປະລະຫວ່າງພາກທຸລະກິດ ແລະ ງານວາງສະແດງສິນຄ້າຊາຍແດນ ຂອງ ສອງປະເທດ.

- ປະສານກັນສ້າງກົນໄກການສົ່ງເສີມພາກທຸລະກິດ ຂອງທັງສອງຝ່າຍ ປະຕິບັດການຊຳລະສະສາງມູນຄ່າການນຳເຂົ້າ-ສົ່ງອອກ ຜ່ານລະບົບທະນາຄານ.

- ເພີ່ມທະວີຕື່ມ ກ່ຽວກັບ ວຽກງານການແລກປ່ຽນຂໍ້ມູນຂ່າວສານ ແລະ ບົດຮຽນໃນການຄຸ້ມຄອງວຽກງານດັ່ງກ່າວ ກັບບັນດາຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ.

ໃນປີ 2015 ສອງຝ່າຍຈະປະສານກັນຄົ້ນຄວ້າສ້າງສິ່ງພິມ, ປຶ້ມຄູ່ມື ແລະ ເວັບໄຊຂໍ້ມູນຂ່າວສານ ກ່ຽວກັບການຄ້າຊາຍແດນເປັນພາສາລາວ, ພາສາຫວຽດນາມ ແລະ ພາສາອັງກິດ ເພື່ອໂຄສະນາ, ເຜີຍແຜ່ ບັນດາກົນໄກການຮ່ວມມື, ນະໂຍບາຍການຄ້າຊາຍແດນ, ບັນຊີບັນດາທຸລະກິດທີ່ມີຄວາມໜ້າເຊື່ອຖື ແລະ ຜະລິດຕະພັນສິນຄ້າສະເພາະແຕ່ລະທ້ອງຖິ່ນ ຂອງ ທັງສອງປະເທດ.

- ຮ່ວມກັນສ້າງແຜນການດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອເຂົ້າມາລົງທຶນໃນການພັດທະນາການຄ້າຊາຍແດນ ແນ່ໃສ່ປະກອບສ່ວນຊຸກຍູ້ສົ່ງເສີມເສດຖະກິດ-ສັງຄົມ ແລະ ລົບລ້າງຄວາມທຸກຍາກໃຫ້ແກ່ປະຊາຊົນທີ່ອາໄສຢູ່ເຂດຊາຍແດນ ຂອງ ທັງສອງປະເທດ.

- ສອງຝ່າຍສືບຕໍ່ປະສານສົມທົບກັບບັນດາທ້ອງຖິ່ນຊາຍແດນ ເພີ່ມທະວີວຽກງານການຄຸ້ມຄອງຕະຫຼາດ ແນ່ໃສ່ຫຼຸດຜ່ອນການຄ້າຂາຍນອກລະບົບ ແລະ ການສໍ້ໂກງທາງດ້ານການຄ້າ ລະຫວ່າງ ສອງປະເທດ.

## 6. <u>ການຈັດຕັ້ງກອງປະຊຸມຄັ້ງທີ X</u>

ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ X ຂັ້ນລັດຖະມົນຕີ ຈະຈັດຂຶ້ນໃນປີ 2016 ທີ່ ສປປ ລາວ ສຳລັບວັນເວລາ ແລະ ສະຖານທີ່ໃນການຈັດກອງປະຊຸມຢ່າງເປັນທາງການແມ່ນຝ່າຍເຈົ້າພາບຈະເປັນຜູ້ກຳນົດ ແລະ ຈະແຈ້ງໃຫ້ກັນຊາບຕາມພາຍຫຼັງ.

ໃນກອບຂອງກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ X ສອງຝ່າຍຈະປະສານກັນຈັດຕັ້ງວາງສະແດງສິນຄ້າ ແລະ ການພົບປະລະຫວ່າງພາກທຸລະກິດ ລາວ-ຫວຽດນາມ.

ຄະນະຜູ້ແທນຝ່າຍລາວ ໄດ້ສະແດງຄວາມຂອບໃຈ ຕໍ່ການນຳ ກະຊວງ ອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ແລະ ການນຳແຂວງດຽນບຽນ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ, ເຕັມໄປດ້ວຍໄມຕີຈິດມິດຕະພາບ, ຄວາມສາມັກຄີແບບພິເສດ ແລະ ໄດ້ສ້າງເງື່ອນໄຂສະດວກໃຫ້ແກ່ຄະນະຜູ້ແທນຝ່າຍລາວ ໃນເວລາເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ ຫວຽດນາມ.

ບົດບັນທຶກສະບັບນີ້ໄດ້ຖືກສ້າງຂຶ້ນໃນວັນທີ 26 ກັນຍາ 2014 ທີ່ ນະຄອນດຽນບຽນຟູ, ແຂວງດຽນບຽນ, ສສ ຫວຽດນາມ ເປັນສອງ (02) ສະບັບ ພາສາລາວ ແລະ ພາສາຫວຽດນາມ ທັງສອງສະບັບລ້ວນແລ້ວແຕ່ມີຄຸນຄ່າເທົ່າທຽມກັນ ແລະ ແຕ່ລະຝ່າຍຮັກສາໄວ້ໜຶ່ງ (01) ສະບັບ.

ລັດຖະມົນວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ

ເຂັມມະນີ ພົນເສນາ

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ

ຫວູ ຮວີ ຮວາງ